# ຂໍ້ມູນສ່ວນໂຕ

## ປ່ຽນລະຫັດຜ່ານ ເຮັດແນວໃດ ?

<u>ການປ່ຽນລະຫັດຜ່ານດ້ວຍຕົວເອງ</u>

**1. ໃຫ້ກົດໃສ່ເມນູ ຮູບໄອຄອນຄົນ ແລະ ກົດ ຂໍ້ມູນສ່ວນຕົວ**




**2. ຫຼັງຈາກນັ້ນ ພິມລະຫັດຜ່ານໃໝ່ ແລະ ຢືນຢັນລະຫັດຜ່ານ ແລ້ວ ກົດ ບັນທຶກ**

*** ຕົວຢ່າງລະຫັດ ຕ້ອງມີຕົວເລກ ແລະ ຕົວໜັງສືພາສາອັງກິດນ້ອຍ ທັງໝົດລວມກັຍນ 8 ໂຕຂຶ້ນໄປ ( b1230385 ຫລື dkor1234 ຫລື bansi11la )**




**ໝາຍເຫດ: ຫ້ອງແບບຟອມທີ່ມີເຄື່ອງໝາຍ( * ) ແມ່ນລະບົບບັງຄັບໃຫ້ໃສ່ຂໍ້ມູນ**

- **ຊື່ : ໝາຍເຖິງ ຊື່ ຊື່ຜູ້ໃຊ້ງານທີ່ຈະສະແດງໃນລະບົບ**
- **ລະຫັດຜ່ານ : ໝາຍເຖິງ ລະຫັດທີ່ໃຊ້ລ໋ອກອິນເຂົ້າລະບົບ**

  **( ຕົວຢ່າງລະຫັດ ຕ້ອງມີຕົວເລກ ແລະ ຕົວໜັງສືພາສາອັງກິດນ້ອຍ ທັງໝົດລວມກັນ 8 ໂຕຂຶ້ນໄປ ( b1230385 ຫລື dkor1234 ຫລື bansi11la )**
- **ຢືນຢັນລະຫັດຜ່ານ : ໝາຍເຖິງ ລະຫັດທີ່ໃຊ້ລ໋ອກອິນເຂົ້າລະບົບອີກຄັ້ງ**
- **ເບີໂທລະສັບ : ໝາຍເຖິງ ເລກເບີໂທລະສັບຂອງຜູ້ໃຊ້ງານ**
- **ເປີດໃຊ້ 2FA : ໝາຍເຖິງ ການເປີດການນຳໃຊ້ລະຫັດຢືນຢັນຄວາມປອດໄພທີ່ລະບົບຈະສົ່ງເຂົ້າໄປທາງອີເມວໃຫ້ເວລາລ໋ອກອິນ ເຂົ້າລະບົບ**

# ປິດລະຫັດທູເອັບເອ ( 2FA ) ເຮັດແນວໃດ ?

**<u>ປິດລະຫັດ 2FA</u>**

**1. ໃຫ້ກົດໃສ່ເມນູ ຮູບໄອຄອນຄົນ ແລະ ກົດ ຂໍ້ມູນສ່ວນຕົວ**




**2. ຫຼັງຈາກນັ້ນ ກົດ ປິດໃຊ້ງານ 2FA**




**ໝາຍເຫດ: ຫ້ອງແບບຟອມທີ່ມີເຄື່ອງໝາຍ( * ) ແມ່ນລະບົບບັງຄັບໃຫ້ໃສ່ຂໍ້ມູນ**

- **ເປີດໃຊ້ 2FA : ໝາຍເຖິງ ການເປີດການນຳໃຊ້ລະຫັດຢືນຢັນຄວາມປອດໄພທີ່ລະບົບຈະສົ່ງເຂົ້າໄປທາງອີເມວໃຫ້ເວລາລ໋ອກອິນ ເຂົ້າລະບົບ**

# ລືມລະຫັດຜ່ານ ການເຂົ້າລະບົບຜ່ານລະຫັດ OTP

## ການເຂົ້າລະບົບຜ່ານລະຫັດ OTP

ສຳລັບ ອີເມວ ກັບ ເບີໂທທີ່ບໍ່ຜ່ານສະໝັກໃຊ້**:** ໂດຍເປັນການສົ່ງລະຫັດ OTP ຜ່ານໂທລະສັບ

1. ການເຂົ້າລະບົບຜ່ານ OTP ໃຫ້ກົດ **ເຂົ້າລະບົບຜ່ານລະຫັດ OTP**




2. ລະບົບຈະສະແດງໜ້າເຂົ້າລະບົບ ໃຫ້ເຮົາໃສ່ເບີໂທທີ່ຜູກກັບອີເມວ ແລ້ວກົດ **ສົ່ງລະຫັດOTP**




3. ລະບົບຈະໃຫ້ເຮົາເອົາລະຫັດທີ່ສົ່ງເຂົ້າໃນໂທລະສັບມາໃສ່ໃນລະບົບ ແລ້ວກົດ **ເຂົ້າລະບົບ**



# ລືມລະຫັດຜ່ານ ເຂົ້າຜ່ານ email

**<u>ວິທີແກ້ໄຂລືມລະຫັດຜ່ານ</u>**

1. ຖ້າເຮົາລືມລະຫັດຜ່ານ ຫຼື ຢາກຕັ້ງລະຫັດຜ່ານໃໝ່ໃຫ້ເຮົາກົດໃສ່ **ຂ້ອຍລືມລະຫັດຜ່ານ**




2. ຫຼັງຈາກນັ້ນໃຫ້ເຮົາພິມອີເມວໃສ່ບ່ອນ ໃສ່ອີເມວຂອງເຈົ້າ ແລ້ວກົດ **ສົ່ງ**




ໃສ່ເມວອີກຄັ້ງ ແລ້ວກົດ **ສົ່ງ**




3. ຈາກນັ້ນລະບົບຈະສົ່ງຂໍ້ຄວາມໄປຫາທາງອີເມວ ແລ້ວ ໃຫ້ເຮົາເຂົ້າກວດເບິ່ງ ແລ້ວກົດໃສ່ **Reset Password**




4. ຈາກນັ້ນໃຫ້ໃສ່ ອີເມວປະຈຸບັນ ແລະ ລະຫັດຜ່ານໃໝ່ ຢືນຢັນລະຫັດຜ່ານໃໝ່ ແລ້ວ ກົດ **ຕັ້ງໃໝ່**

* ຕ້ອງປະກອບດ້ວຍຢ່າງໜ້ອຍ ຫນຶ່ງຕົວເລກ(0-9), ຕົວພິມນ້ອຍ(a-z) ແລະ ຢ່າງໜ້ອຍ 8 ຕົວອັກສອນຂຶ້ນໄປ




**ໝາຍເຫດ:**

- **ອີເມວປະຈຸບັນ :** ໝາຍເຖິງ ອີເມວທີ່ນຳໃຊ້ລະບົບໃນແຕ່ລະຄັ້ງ
- **ລະຫັດຜ່ານໃໝ່** : ໝາຍເຖິງ ລະຫັດຜ່ານທີ່ຈະໃຊ້ເຂົ້າໃນລະບົບຄັ້ງຕໍ່ໄປ
- **ຢືນຢັນລະຫັດຜ່ານໃໝ່** : ໝາຍເຖິງ ຕ້ອງແມ່ນອັນດຽວກັນກັບລະຫັດຜ່ານໃໝ່

  **ລະຫັດຜ່ານ** : ໝາຍເຖິງ ລະຫັດທີ່ໃຊ້ລັອກອິນເຂົ້າລະບົບ ( **ຕົວຢ່າງລະຫັດ ຕ້ອງມີຕົວເລກ ແລະ ຕົວໜັງສືພາສາອັງກິດນ້ອຍ ທັງໝົດລວມກັນ 8 ໂຕຂຶ້ນໄປ ( b1230385 ຫລື dkor1234 ຫລື bansi11la** )

# ຂັ້ນຕອນການຢັ້ງຢືນເບີໂທ

<u>**ຂັ້ນຕອນການຢັ້ງຢືນເບີໂທ**</u>

**1. ຄິກໃສ່ ໄອຄ້ອນຄົນ ຈາກນັ້ນເລືອກ ຂໍ້ມູນສ່ວນຕົວ**




2. ເມື່ອເຂົ້າມາຫນ້າແກ້ໄຂຜູ້ໃຊ້ແລ້ວກົດ **ຢືນຢັນ**




3. ຈາກນັ້ນລະບົບຈະສົ່ງລະຫັດລັບ2FAໄປທີ່ເບີໂທຂອງທ່ານ ຕື່ມຕົວເລກລະຫັດໃສ່ແລ້ວກົດ **ຢືນຢັນ** ຖືວ່າສຳເລັດ



# ຂັ້ນຕອນການປ່ຽນເບີໂທ ຫຼື ການຜູກເບີໂທ

<u>**ຂັ້ນຕອນການປ່ຽນເບີໂທ ຫຼື ການຜູກເບີໂທ:**</u>

**1. ກົດໃສ່ໄອຄ້ອນຄົນ ແລ້ວເລືອກ ຂໍ້ມູນສ່ວນຕົວ**




**2. ພິມເບີໃໝ່ທີ່ທ່ານຕ້ອງການໃສ່ຫ້ອງ ເບີໂທລະສັບ ແຕ່ມີເງື່ອນໄຂເບີຕ້ອງບໍ່ເຄີຍນຳໃຊ້ລົງທະບຽນລະບົບ bansi.la ມາກ່ອນ ຈາກນັ້ນກົດ ບັນທຶກ ຖືວ່າສຳເລັດ.**



# ເຮັດແນວໃດດີເມື່ອລະຫັດ 2FA ຫຼື OTP ບໍ່ສົ່ງເຂົ້າເມວ?

<u>**ລະຫັດ 2FA ຫຼື OTP ບໍ່ເຂົ້າເມວສາມາດແກ້ໄຂໄດ້ດັ່ງນີ້:**</u>

**1. ເມື່ອທ່ານເຂົ້າມາໃນໜ້າGmail ເຊິ່ງເມວຕ້ອງເປັນເມວດຽວກັນກັບເມວທີ່ທ່ານລົງທະບຽນກັບລະບົບ bansi.la. ຈາກນັ້ນສັງເກດທີ່ແຖບດ້ານຊ້າຍໃຫ້ທ່ານກວດເບິ່ງອິນບັອກຖ້າບໍ່ເຫັນເມວແຈ້ງລະຫັດ OTP, ໃຫ້ທ່ານເລື່ອນລົງຄິກໃສ່ຫ້ອງ ສະແປມ**

## ຕົວຢ່າງ:




2. ພາຍຫລັງຄິກໃສ່ຫ້ອງສະແປມກໍຈະເຫັນເມວແຈ້ງລະຫັດ




3. ຈາກນັ້ນນຳລະຫັດໄປໃສ່ ແລ້ວກົດຢືນຢັນ



# ວິທີປ່ຽນຊື່ຜູ້ໃຊ້

<u>ວິທີປ່ຽນຊື່ຜູ້ໃຊ້</u>

**1. ກົດໃສ່ ໄອຄ້ອນຄົນ ແລ້ວເລືອກ ຂໍ້ມູນສ່ວນຕົວ**




**2. ຈາກນັ້ນຄິກໃສ່ຫ້ອງ ຊື່ ເພື່ອແກ້ໄຂຫຼືປ່ຽນຊື່ໃຫມ່ ແລ້ວກົດບັນທຶກ**

